ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 006 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 11 AUG 2015

# ໃບອະນຸຍາດ

## ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 006/ຄລຕ ລົງວັນທີ 08 ກໍລະກົດ 2009.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອະນຸຍາດ:**

**ມາດຕາ 1:** ໃຫ້ບໍລິສັດ (ຊື່ເປັນພາສາລາວ) ……………**ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ)**…………………………
(ຊື່ເປັນພາສາສາກົນ) ..**ELECTRICITE DU LAOS GENERATION PUBLIC COMPANY (EDL-Gen)**.
ທະບຽນວິສາຫະກິດເລກທີ: ………………………………**1174/ຈທວ**……………………………………………
ທຶນຈົດທະບຽນ: ……………………**4.904.867.060.000**…………………………ກີບ
ທີ່ຕັ້ງສຳນັກງານ: ບ້ານ……….**ທົ່ງກາງ**………., ເມືອງ …………………**ສີສັດຕະນາກ**……………………,
ແຂວງ……………**ນະຄອນຫຼວງວຽງຈັນ**…………., ຖະໜົນ ………………**ມິດຕະພາບລາວ-ໄທ**…………………
ອອກຮຸ້ນປະເພດ: ……………**ຮຸ້ນສາມັນ**…………. ລະຫັດ: LA-3-00002-000-5
ຈຳນວນຮຸ້ນທີ່ອອກ: ……………. **453.086.932** …………………ຮຸ້ນ
ມູນຄ່າກຳນົດ: ………………………**4.000**……………………………ກີບ/ຮຸ້ນ
ລາຄາຂາຍ: ……………**6.000 (RO) ແລະ 6.800 (PO)**………………ກີບ/ຮຸ້ນ
ມູນຄ່າທັງໝົດ: ……………………**2.754.000.000.000**……………………ກີບ

**ມາດຕາ 2:** ພາຍຫຼັງອອກຈຳໜ່າຍຮຸ້ນແລ້ວ **ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ** ຕ້ອງປະຕິບັດຕາມ ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 3:** ໃບອະນຸຍາດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສາຍສະໝອນ ຈັນທະຈັກ

**ໝາຍເຫດ:**

1. ໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນສະບັບນີ້ ມີຜົນນຳໃຊ້ສະເພາະການອອກຈຳໜ່າຍຮຸ້ນຄັ້ງນີ້ ເທົ່ານັ້ນ.
2. ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ ໃບອະນຸຍາດສະບັບນີ້ໄດ້.
3. ພາຍຫຼັງບໍລິສັດໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມລະບຽບ ແລະ ຂັ້ນຕອນການອອກຈຳໜ່າຍຮຸ້ນທີ່ໄດ້ກຳນົດໄວ້.
4. ທຸກການປັບປຸງ, ປ່ຽນແປງ ຂໍ້ມູນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດສະບັບນີ້ ຕ້ອງໄດ້ຮັບ ການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ.